Washington State Department of Social & Health Services — Transforming lives

DEVELOPMENTAL DISABILITIES ADMINISTRATION (DDA)

# ໃບແຈ້ງການກ່ຽວກັບລາຍລະອຽດບໍ່ພຽງພໍສໍາລັບການຮ້ອງຂໍໃຫມ່
# Notice of Insufficient Information for Reapplication

ວັນທີ:

| ຊື່ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ | ຊື່ ແລະ ທີ່ຢູ່ຂອງຜູ້ຕາງຫນ້າຕາມກົດຫມາຍ |
|---|---|

ມາຍັງ :

ພະແນກປົກຄອງຄວາມເສັຽອົງຄະດ້ານການຈະເຣີນເຕີບຕົວ (DDA) ໄດ້ຮັບ “ຄໍາຮ້ອງຂໍເອົາການພິຈາລະນາເບິ່ງເງື່ອນໄຂຮັບເອົາຂອງພະແນກ DDA” ຂອງທ່ານໃນວັນທີ .

ຄໍາຮ້ອງຂໍເອົາການພິຈາລະນາເບິ່ງເງື່ອນໄຂໄດ້ຮັບຂອງພະແນກ DDA ຂອງທ່ານໃນກ່ອນໄດ້ຖືກປະຕິເສດໃນວັນທີ , ຫລັງຈາກການກວດເບິ່ງຄືນໃນບັນທຶກທີ່ຖືກຊີ້ບອກຢູ່ຂ້າງລຸ່ມນີ້:

ພະແນກ DDA ບໍ່ສາມາດດໍາເນີນຄໍາຮ້ອງຂໍປັດຈຸບັນໄດ້ຍ້ອນມັນບໍ່ມີລາຍລະອຽດເພີ້ມເຕີມ ຫລື ອັນໃຫມ່. ເພື່ອວ່າພະແນກ DDA ຈະດໍາເນີນຄໍາຮ້ອງຂໍອັນນີ້, ກະຣຸນາສົ່ງລາຍລະອຽດເພີ້ມເຕີມ ຫລື ອັນໃຫມ່ມາໃຫ້, **ພາຍໃນ 30 ວັນຂອງໃບແຈ້ງການໃບນີ້.** ກະຣຸນາເບິ່ງໃສ່ກົດຫມາຍປົກຄອງຣັດວໍຊິງຕັນ (Washington Administrative Code) 388-823-1080(3), ຊຶ່ງໄດ້ຖືກກ່າວຄືນຢູ່ຂ້າງລຸ່ມນີ້.

ຂອບໃຈ.

| ຊື່ | ຫນ້າທີ່ການ | ເລກໂທຣະສັບ | ທີ່ຢູ່ອີເມລ໌ |
|---|---|---|---|

**WAC 388-823-1080: ຖ້າຫາກວ່າພະແນກ DDA ຕັດສິນວ່າຂ້າພະເຈົ້າບໍ່ສອດຄ່ອງນໍາກົດກໍານົດຂອງເງື່ອນໄຂຮັບເອົາ, ດົນປານໃດຂ້າພະເຈົ້າຈຶ່ງຈະສາມາດຂໍເອົາການຕັດສິນໃຫມ່ໄດ້?**

ຖ້າຫາກວ່າພະແນກ DDA ຕັດສິນວ່າທ່ານບໍ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕຕາມທີ່ຖືກຕີຄວາມຫມາຍຢູ່ໃນມາດຕານີ້, ທ່ານຈະຮ້ອງຂໍໃຫມ່ໄດ້ເທົ່ານັ້ນຖ້າຫາກວ່າ:

(1) ເງື່ອນໄຂຮັບເອົາຂອງທ່ານໄດ້ຖືກຕັດຍ້ອນວ່າພະແນກ DDA ບໍ່ສາມາດຊອກຫາທ່ານ ແລະ ທ່ານບໍ່ໄດ້ຕິດຕໍ່ມາຫາພະແນກ DDA ໃນເວລາຕໍ່ມາ;

(2) ເງື່ອນໄຂຮັບເອົາຂອງທ່ານໄດ້ຖືກຕັດຍ້ອນວ່າທ່ານເສັຽການອາສັຍຢູ່ໃນຣັດວໍຊິງຕັນ ແລະ ທ່ານໄດ້ກໍຕັ້ງການອາສັຍຢູ່ໃຫມ່;

(3) ທ່ານມີລາຍລະອຽດເພີ້ມເຕີມ ຫລື ອັນໃຫມ່ຊຶ່ງກ່ຽວຂ້ອງນໍາການພິຈາລະນາເບິ່ງເງື່ອນໄຂໄດ້ຮັບຊຶ່ງພະແນກ DDA ບໍ່ໄດ້ກວດເບິ່ງຄືນໃນການພິຈາລະນາເບິ່ງເງື່ອນໄຂຮັບເອົາໃນເທື່ອກ່ອນ;ຫລື

(4) ພະແນກ DDA ປະຕິເສດ ຫລື ຕັດເງື່ອນໄຂຮັບເອົາຂອງທ່ານອີງຕາມສະເພາະແຕ່ລະແນນ ICAP ຂອງທ່ານເທົ່ານັ້ນ ແລະ ເວລາໄດ້ຜ່ານມາດົນນານກວ່າຊາວສີ່ເດືອນແລ້ວຕັ້ງແຕ່ ICAP ເທື່ອສຸດທ້າຍຂອງທ່ານ.